ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດ ໄຕມາດ 3

30 ກັນຍາ 2020



Lao-Thai Friendship Road, Thongkang Village, Sisattanak District, P.O. Box 2392, Vientiane Capital. Lao PDR.
Tel: (856-21)316142. Fax: (856-21)316141, Email: edlgenhq@edlgen.com.la website: www.edlgen.com.la

ສາລະບານ

1. ປະຫວັດຫຍໍ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ 1

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ 2

3. ກົງຈັກການຈັດຕັ້ງ 4

   3.1 ໂຄງຮ່າງການຈັດຕັ້ງ 4

4. ຄະນະກຳມະການຕ່າງໆ 9

   4.1 ຄະນະກຳມະການຂອງສະພາບໍລິຫານ 9

      1. ຄະນະກຳມະການກວດສອບ 9

      2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ 9

   4.2 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່ 9

      1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ 9

      2. ຄະນະກຳມະການຈັດຊື້ ແລະ ສະໜອງອັດສະດຸອຸປະກອນ (ຄຈຊ) 9

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ 9

   5.1 ການຜະລິດ 10

   5.2 ລາຍຮັບ 10

   5.3 ລາຍຈ່າຍ 10

   5.4 ກຳໄລສຸດທິໃນການດຳເນີນທຸລະກິດ 10

   5.5 ການມອບພັນທະ 10

   * ເອກະສານຊ້ອນທ້າຍ
     ເອກະສານລາຍງານການເງິນ

1. ປະຫວັດຫຍໍ້ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍລັດວິສາຫະກິດໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້າ ເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າເຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງຕິດຕັ້ງ ທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານໃຫຍ່ຈຳນວນ ໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ່ມທຶນດ້ວຍການອອກຮຸ້ນ ຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ສັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳເລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມສັດສ່ວນການຖືຮຸ້ນ) ເຮັດ ໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດ ທະບຽນເປັນເງິນ 4.904.867.060.000 ກີບ ແລະມີຮຸ້ນທັງໝົດ 1.226.216.765 ຮຸ້ນ ສັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນເດືອນຕຸລາ ປີ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການ ຈັດລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານ ບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມ ຈຳນວນ 392 MW. ໃນນັ້ນ, ໂຄງການພັດທະນາເຂື່ອນໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການຜູ້ຜະລິດໄຟຟ້າເອກະລາດ (IPPs) ຈຳນວນ 5 ໂຄງການ ລວມກຳລັງຕິດຕັ້ງຕາມ ສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ເປົ້າໝາຍຂະຫຍາຍການດຳເນີນທຸລະກິດຂອງ ຜ-ຟຟລ ມາຮອດ ເດືອນກັນຍາ 2015, ຜ-ຟຟລ ໄດ້ອອກຮຸ້ນເພີ່ມທຶນຄັ້ງທີ 3 ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ໂດຍເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ ຈະຖືກນຳໃຊ້ເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW. ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາໂຄງການ IPPs ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເພີ່ມຂຶ້ນລວມເປັນເງິນ 6.717.214.788.000 ກີບ ຫຼື ຈຳນວນຮຸ້ນທັງໝົດ 1.679.303.697 ຮຸ້ນ ສັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ໃນວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບຳພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

ວັນທີ 14 ທັນວາ 2017 ໄດ້ສ້າງຕັ້ງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອ ເຈັນ ຈຳກັດຜູ້ດຽວ.

ວັນທີ 18 ມັງກອນ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳແບ່ງ (10%) ຕາມ ສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 3,4 MW, ວັນທີ 4 ກຸມພາ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນ ໄຟຟ້າດອນສະໂຮງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 52 MW. ໃນວັນທີ 13 ກໍລະກົດ 2018, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດ ທີ່ ປະເທດໄທ ເຊິ່ງສາມາດຂາຍໄດ້ 13.660,40 ລ້ານບາດ ເພື່ອລົງທຶນເຂົ້າໃນການຊື້ຮຸ້ນ ຂອງ ໂຄງການເຂື່ອນໄຟຟ້າໄຊຍະບູລີ ແລະ ດອນສະໂຮງ; ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳລອງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 1 MW ແລະ ໂຮງງານຜະລິດໄຟຟ້າ ພະລັງງານແສງຕາເວັນ (60%) ຕາມສັດສ່ວນ ຜ-ຟຟລ ຖືຮຸ້ນເທົ່າກັບ 19,2 MW.

ປີ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າໄຊຍະບູລີ ໃນວັນທີ 19 ມີນາ 2019 ຕາມຊັດສ່ວນ ທີ່ ຟຟລ ຖືຮຸ້ນ 20% ເທົ່າກັບກຳລັງການຕິດຕັ້ງ 257 MW; ໃນເດືອນພຶດສະພາ 2019, ຜ-ຟຟລ ໄດ້ຮັບໂອນ ຮຸ້ນຂອງເຂື່ອນໄຟຟ້ານ້ຳມັງ 1 ຕາມຊັດສ່ວນ ຟຟລ ຖືຮຸ້ນ 10% ເທົ່າກັບ 6,4 MW ແລະ ເຂື່ອນໄຟຟ້ານ້ຳອູ 2, 5 ແລະ 6 ດ້ວຍຊັດສ່ວນທີ່ ຟຟລ ຖືຮຸ້ນ 15% ເທົ່າກັບ 18 MW, 36 MW ແລະ 27 MW ຕາມລຳດັບ ເຮັດ ໃຫ້ ຜ-ຟຟລ ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 1.551 MW.

ມາຮອດໄຕມາດ 3 ປີ 2020 ກຳລັງການຕິດຕັ້ງຂອງເຂື່ອນ ທີ່ມີການດຳເນີນການຜະລິດແລ້ວ ຂອງ ຜ-ຟ ຟລ ທັງໝົດ 1.649 MW, ໃນນັ້ນ ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງຮ້ອຍເປີເຊັນ ມີທັງໝົດ 10 ເຂື່ອນ ລວມເປັນ ກຳລັງຕິດຕັ້ງ 699 MW, ແລະ ເຂື່ອນຜູ້ຜະລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 14 ເຂື່ອນ ລວມກຳລັງຕິດຕັ້ງຕາມສັດສ່ວນ 950 MW.

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ ,ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ ຂຶ້ນແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການ ຜູ້ຜະລິດໄຟຟ້າເອກະລາດ (Independent Power Producer: IPPs);
3. ຮັບໝ້ຳບໍລິການ ການເດີນເຄື່ອງ ແລະບຳລຸງຮັກສາ (Operation & Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆໃນຂອບເຂດທົ່ວປະເທດ.

❖ ວິໄສທັດ

1. ເປັນບໍລິສັດນຳໜ້າອັນດັບໜຶ່ງຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານ ໄຟຟ້າຢ່າງພຽງພໍ ແລະ ທັນການ ໃຫ້ແກ່ການພັດທະນາ ເສດຖະກິດ-ສັງຄົມ ຂອງ ສປປ ລາວ.

2. ເປັນບໍລິສັດທີ່ຈະປະກອບສ່ວນຢ່າງແຂງແຮງ ສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟຂອງ ອາຊຽນ ແລະ ປະກອບສ່ວນຢ່າງເຕັມກຳລັງ ເຮັດໃຫ້ຂົງເຂດອາຊຽນ ມີຄວາມຫມັ້ນຄົງທາງດ້ານພະລັງງານຢ່າງຍືນຍົງ.
3. ເປັນບໍລິສັດແນວໜ້າໃນການໃຫ້ການບໍລິການ O&M ໂຮງງານໄຟຟ້າ ພາຍໃນ ແລະ ຂົງເຂດອາຊຽນ.
4. ເປັນບໍລິສັດແນວໜ້າໃນການສ້າງມູນຄ່າເພີ່ມ ໃຫ້ແກ່ຜູ້ຖືຮຸ້ນຈາກການລົງທຶນ.


❖ **ພາລະກິດ**

1. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແໜ້ນ ກັບ ລັດວິສາຫະກິດໄຟຟ້າລາວ ໃນການສະໜອງພະລັງງານໄຟຟ້າຢ່າງໝັ້ນຄົງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະຫນອງໃຫ້ແກ່ການພັດທະນາ ເສດຖະກິດ-ສັງຄົມ ໃນທົ່ວປະເທດ ແລະ ໃນຂົງເຂດອາຊຽນ ດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.
2. ສະໜອງພະລັງໄຟຟ້າຈາກພະລັງງານທົດແທນທີ່ສະອາດ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານ.
3. ລົງທຶນໃນຂະແໜງທຸລະກິດຕ່າງໆ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນໂດຍນຳໃຊ້ທຶນ ແລະ ຊັບສິນຂອງ ບໍລິສັດກໍ່ຄື ຊັບສິນຂອງຜູ້ຖືຮຸ້ນ.
4. ຮັບຜິດຊອບຕໍ່ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນໄດ້ ສ່ວນເສຍ ຢ່າງເຕັມສ່ວນໃນການປົກປັກຮັກສາຊັບສິນ ຂອງຜູ້ຖືຮຸ້ນ ໃຫ້ມີຄວາມຫມັ້ນຄົງ.
5. ຕັ້ງຫນ້າສ້າງຄວາມຮັ່ງມີ ແລະ ມູນຄ່າໃນໄລຍະຍາວໃຫ້ແກ່ຜູ້ຖືຮຸ້ນ.
6. ປະຕິບັດຕາມ ວິໄສທັດ ແລະ ພາລະກິດ ທີ່ໄດ້ຮັບມອບຫມາຍ ຢ່າງຄ່ອງແຄ້ວ ແລະ ມີຫລັກການ ໂດຍ ຄຳນຶງເຖິງ ບັນດາຄວາມສ່ຽງຕ່າງໆ ໃນປັດຈຸບັນ ແລະ ອະນາຄົດ.
7. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ ຈະແຈ້ງໂປ່ງໃສ ແລະ ກວດສອບໄດ້.
8. ປະຕິບັດຕໍ່ທຸກຝ່າຍທີ່ກ່ຽວຂ້ອງ ຢ່າງສະເໝີພາບເທົ່າທຽມກັນ ແລະ ຫຼີກເວັ້ນສະພາບທີ່ຈະກໍ່ໃຫ້ເກີດມີຂໍ້ ຂັດແຍ່ງທາງດ້ານຜົນປະໂຫຍດ ຫລື ຜົນປະໂຫຍດຊ້ຳຊ້ອນ.
9. ນຳໃຊ້ ຫົວຄິດປະດິດສ້າງ ແລະ ເຕັກນິກວິທະຍາການ ທີ່ກ້າວຫນ້າແນໃສ່ຍົກສູງປະສິດທິພາບໃນການ ບໍລິຫານທຸລະກິດ ແລະ ການຜະລິດ ຢ່າງຕໍ່ເນື່ອງ ແລະ ໃຫ້ສາມາດແຂ່ງຂັນໄດ້.
10. ຕັ້ງຫນ້າຍົກສູງ ແລະ ພັດທະນາ ຄຸນສົມບັດ ແລະ ຄວາມສາມາດ ຂອງພະນັກງານ ຂອງບໍລິສັດໃນທຸກ ລະດັບ ໃຫ້ມີຄວາມກ້າວຫນ້າ ແລະ ມີສ່ວນຮ່ວມໃນການຂະຫຍາຍ ແລະ ພັດທະນາບໍລິສັດ ດ້ວຍຄວາມ ຮູ້ສຶກທີ່ພາກພູມໃຈ, ມີຄວາມຮັບຜິດຊອບ ແລະ ເປັນເຈົ້າຂອງ ແນໃສ່ພັດທະນາພະນັກງານຂອງບໍລິສັດ ໃນດ້ານການໃຫ້ບໍລິການ O&M ໃຫ້ໂຮງງານໄຟຟ້າທັງພາຍໃນ-ຂົງເຂດອາຊຽນຢ່າງຕໍ່ເນື່ອງ ແລະໃຫ້ ສາມາດແຂ່ງຂັນໄດ້.
11. ເອົາໃຈໃສ່ ຕໍ່ສັງຄົມ, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ.

3. ภิ๊งจัภาภามจัดตั้ง

3.1 โถงธ่างภามจัดตั้ง

โถงธ่างภามจัดตั้ง ผ-ฟฟล ปะภอบด้อย สะพาบໍลิชาม 09 ท่าม (ในนี้ภำมะภามอิดสะชาละ 3 ท่าม), ถะมะผู้อำนอยภามใหย่ 5 ท่าม, มิ 5 ฝ่าย, 18 พะแมภา แถะ 13 เฮื่อม.



ຄະນະສະພາບໍລິຫານ ແລະ ປະຫວັດຫຍໍ້
ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ

* ວັນເດືອນປີເກີດ: 05/05/1955
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ:
  - ປະລິນຍາເອກ, ພາກວິຊາການພັດທະນາເສດຖະກິດ.
  - ປະລິນຍາໂທ, ພາກວິຊາວິສະວະກຳໄຟຟ້າ ອະດີດສະຫະພາບໂຊຫວຽດ.



ທ່ານ ຈັນທະບຸນ ສຸກອາລຸນ
ຮອງປະທານສະພາບໍລິຫານ

* ວັນເດືອນປີເກີດ: 03/05/1973
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ວ່າການອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ.
  - ປະລິນຍາຕີສາຂາ ວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.



ທ່ານ ດວງສີ ພາຣາຍິກ
ກຳມະການ

* ວັນເດືອນປີເກີດ: 08/03/1962
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
* ລະດັບການສຶກສາ:
  - ປະລິນຍາໂທ, ພາກວິຊາລະບົບຕາໜ່າງໄຟຟ້າ, ອະດີດສະຫະພາບໂຊຫວຽດ.



ທ່ານ ຄຳພັ ທິນນະກອນ
ກຳມະການ

* ວັນເດືອນປີເກີດ: 05/05/1961
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ການເງິນ ແລະ ສິນເຊື່ອ, ມະຫາວິທະຍາໄລເສດຖະສາດ ບຸນຍັດຊາແດ ລັດອາແຊບາຍຈັນ, ອາດີດສະຫະພາບໂຊຫວຽດ



ທ່ານ ສົມພິດ ແກ້ວວິຈິດ
ກຳມະການ

* ວັນເດືອນປີເກີດ: 01/05/1968
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ:
  - ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ມະຫາວິທະຍາໄລແຫ່ງຊາດລາວ



ທ່ານ ໂກມົນຈັນ ເພັດອາສາ
ກຳມະການ

* ວັນເດືອນປີເກີດ: 25/12/1962
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການ ບໍລິສັດໄຟຟ້ານ້ຳງື່ມ 3 ຈຳກັດ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ພາກວິສະວະກຳກົນຈັກ, ມະຫາວິທະຍາໄລຊຽງໃໝ່, ປະເທດໄທ.



ທ່ານ ຄຳແກ້ວ ວິສີສົມບັດ
ກຳມະການອິດສະຫລະ

* ວັນເດືອນປີເກີດ: 29/12/1975
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາ ເສດຖະສາດ, ປະເທດອິດສະຕາລີ.



ທ່ານ ນາງ ທะວີຈັນ ທ່ຽງເທບວົງສາ
ກຳມะການອິດສะຫละ

* ວັນເດືອນປີເກີດ: 02/05/1972
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຮອງຫົວໜ້າກົມສົ່ງເສີມການລົງທຶນ ຊີ້ນຳວຽກງານການລົງທຶນຮ່ວມ ລะหว่างพากลัด ແລะ ເอกะชิน, กะซวงแผนการ ແລะ การลงทุน
* ລະດັບການສຶກສາ:
  - ປະລິນຍາໂທ ສາຂາເສດຖະສາດເພື່ອການພັດທะนา, ที่มะหาวิทะยาไลแห่งชาด อิดสะตาลี, ปะเทดอิดสะตาลี



ທ່ານ ธส. ปอ. พูเพัด ก้งวพิลาวิง
ກຳมะการอิดสะหละ

* ວັນເດືອນປີເກີດ: 05/02/1974
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ถะมะบໍดี, ถะมะเสดถะสาด ແລะ บໍลิหานทุละกิด มะหาวิทะยาไล แห่งชาด
* ລະດັບການສຶກສາ:
  - ปะลินยาเอก สาขาวิชาเสดถะสาด ยู่มะหาวิทะยาไลโกเบ, ปะเทดยี่ปุ่น.

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ -ໄຟຟ້າລາວ ມະຫາຊົນ



ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ວິງສະໜຸນ ຍິ່ງຍິງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການຜະລິດ



ທ່ານ ນ. ສຸກສັນ ພິງພິລາ
ຮອງຜູ້ອຳນວຍການໃຫຍ່
ສາຍງານບໍລິຫານ ແລະ ແຜນການ



ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ

4. ຄະນະກຳມະການຕ່າງໆ

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ສອດຄ່ອງກັບຂໍ້ກຳນົດ, ລະບຽບກົດໝາຍທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ: ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ. ສະນັ້ນ, ໃນໄລຍະໄຕມາດ 3 ປີ 2020 ຄະນະກຳມະການຕ່າງໆໄດ້ປະຕິບັດວຽກງານ ດັ່ງລາຍລະອຽດລຸ່ມນີ້:

4.1. ຄະນະກຳມະການຂອງສະພາບໍລິຫານ

1. ຄະນະກຳມະການກວດສອບ

ໃນການດຳເນີນງານປະຈຳໄຕມາດ 3 ປີ 2020 ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມສາມັນ 1 ຂຶ້ນ ຄັ້ງ, ດັ່ງນີ້:

- ກອງປະຊຸມສາມັນຄັ້ງທີ III ໄດ້ຈັດຂຶ້ນໃນວັນທີ 21 ສິງຫາ 2020 ເພື່ອປຶກສາຫາຫາລືກ່ຽວກັບບົດລາຍງານທາງການເງິນປະຈຳຫົກເດືອນຕົ້ນປີ 2020. ຊຶ່ງໄດ້ຜ່ານການທົບທວນຈາກຜູ້ກວດສອບບັນຊີພາຍນອກ (PwC) ໂດຍໄດ້ມີຄຳເຫັນຕໍ່ຮ່າງບົດລາຍງານການເງິນດັ່ງກ່າວ ແລະ ໄດ້ເຮັດສະໂນດນຳສົ່ງໃຫ້ກອງເລຂາສະພາບໍລິຫານເພື່ອຮັບຮອງໃນກອງປະຊຸມກ່ອນທີ່ຈະເປີດເຜີຍຂໍ້ມູນທີ່ຕະຫລາດຫລັກຊັບລາວ.

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ຈັດກອງປະຊຸມປະຈຳໄຕມາດ 3 ຂຶ້ນ 1 ຄັ້ງ ໄດ້ຈັດກອງປະຊຸມສະໄໝວິສາມັນຄັ້ງທີ I ປະຈຳປີ 2020 ໃນວັນທີ: 29/07/2020 ເຊິ່ງໃນກອງປະຊຸມໄດ້ຄົ້ນຄວ້າປຶກສາຫາລື ດັ່ງນີ້:

- ຄວາມຄືບໜ້າການແກ້ໄຂສະພາບຄ່ອງທາງດ້ານການເງິນ ຂອງ ຜ-ຟຟລ.
- ເຜີຍແຜ່ເນື້ອໃນລະບຽບຄຸ້ມຄອງຄວາມສ່ຽງສະບັບປັບປຸງ.
- ກຳນົດແຜນຈັດກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ ປະຈຳປີ 2021.
- ກຳນົດແຜນການຝຶກອົບຮົມຄະນະກຳມະການຄຸ້ມຄອງຄວາມສ່ຽງ ປະຈຳປີ 2021.

4.2 ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ

ໃນການດຳເນີນງານປະຈຳໄຕມາດ 3 ປີ 2020 ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າ ໄດ້ດຳເນີນການເຄື່ອນໄຫວວຽກງານຂອງ ຜ-ຟຟລ ມີລາຍລະອຽດດັ່ງລຸ່ມນີ້:

- ໄດ້ມີການສືບຕໍ່ຕິດຕາມ ເນື້ອໃນທີ່ລັດຖະບານໄດ້ທັກທ້ວງໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ອະທິບາຍຊີ້ແຈງເຖິງບັນຫາລາຄາໄຟ 2 ໂຄງການ.

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ)

ໃນການດຳເນີນງານປະຈຳໄຕມາດ 3 ປີ 2020 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ຈັດຈ້າງ, ໂດຍ ແບ່ງອອກເປັນ 03 ພາກ ດັ່ງນີ້:

- ພາກ ການປະຕິບັດວຽກ (Works) ຈຳນວນ: 04 ໂຄງການ
- ພາກ ຈັດຊື້ສິນຄ້າ (Goods) ຈຳນວນ: 05 ໂຄງການ
- ພາກ ສະໜອງການບໍລິການ (Service) ຈຳນວນ: 01 ໂຄງການ

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ, ໄດ້ດຳເນີນທຸລະກິດ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໂດຍຈະຄືບຮອບ 10 ປີ ຜ-ຟຟລ ທີ່ໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງໃນແຕ່ລະໄລຍະ ກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອ

ຮອງຮັບການຂະຫຍາຍຕົວຂອງວຽກງານ, ສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ຜ່ານການຈັດຕັ້ງປະຕິບັດ ຜົນການດຳເນີນທຸລະກິດ ປະຈຳໄຕມາດ 3 ປີ 2020 ສາມາດສັງລວມໄດ້ດັ່ງນີ້:

5.1 ການຜະລິດ

ໃນການດຳເນີນງານປະຈຳໄຕມາດ 3 ປີ 2020 ຜ-ຟຟລ ມີເຂື່ອນທີ່ດຳເນີນການຜະລິດກະແສໄຟຟ້າທັງໝົດ 10 ເຂື່ອນ ປະຕິບັດໄດ້ທັງໝົດ 748,81 GWh, ເທົ່າກັບ 70,60% ຂອງແຜນການປະຈຳໄຕມາດ 3 ປີ 2020. ສາເຫດທີ່ເຮັດໃຫ້ບໍ່ໄດ້ຕາມແຜນການ ແມ່ນມາຈາກໄພແຫ້ງແລ້ງປີ 2019 ສົ່ງຜົນໃຫ້ລະດັບນ້ຳຕົ້ງຕົ້ນປີ 2020 ຢູ່ໃນລະດັບຕ່ຳ. ພ້ອມດຽວກັນນີ້, ເນື່ອງຈາກສະພາບດິນຟ້າອາກາດມີການປ່ຽນແປງ ເຮັດໃຫ້ໃນປີ 2020 ຝົນຕົກຊ້າກວ່າ ປີ ຜ່ານມາ.

5.2 ລາຍຮັບ

ໃນໄຕມາດ 3 ປີ 2020 ຜ-ຟຟລ ມີລາຍຮັບທັງໝົດ 593.020 ລ້ານກີບ ເທົ່າກັບ 83,60% ຂອງແຜນການ ໃນນັ້ນມາຈາກລາຍຮັບຈາກການຈຳໜ່າຍກະແສໄຟ 360.194 ລ້ານກີບ ເທົ່າກັບ 60,74% ຂອງລາຍຮັບທັງໝົດ, ລາຍຮັບຈາກ ກຳໄລຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ 229.137 ລ້ານກີບ ເທົ່າກັບ 38,64% ຂອງລາຍຮັບທັງໝົດ ແລະ ລາຍຮັບອື່ນໆ 3.689 ລ້ານກີບ ເທົ່າກັບ 0,62% ຂອງລາຍຮັບທັງໝົດ.

5.3 ລາຍຈ່າຍ

ລາຍຈ່າຍໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ປະຈຳປະຈຳໄຕມາດ 3 ປີ 2020 ເປັນເງິນທັງໝົດ 358.657 ລ້ານກີບ ເທົ່າກັບ 69,53% ຂອງແຜນການ. ໃນນັ້ນປະກອບມີ ລາຍຈ່າຍທາງການເງິນ 182.289 ລ້ານກີບ ເທົ່າກັບ 50,83% ຂອງລາຍຈ່າຍທັງໝົດ, ຕົ້ນທຶນໃນການຂາຍ 133.852 ລ້ານກີບ ເທົ່າກັບ 37,32% ຂອງລາຍຈ່າຍທັງໝົດ, ລາຍຈ່າຍໃນການດຳເນີນງານ 30.499 ລ້ານກີບ ເທົ່າກັບ 8,50% ຂອງລາຍຈ່າຍທັງໝົດ, ຂາດທຶນສຸດທິຈາກອັດຕາແລກປ່ຽນ 11.413 ລ້ານກີບ ເທົ່າກັບ 3,18% ຂອງລາຍຈ່າຍທັງໝົດ ແລະ ລາຍຈ່າຍອາກອນກຳໄລ 604 ລ້ານກີບ ເທົ່າກັບ 0,17% ຂອງລາຍຈ່າຍທັງໝົດ.

5.4 ກຳໄລສຸດທິໃນການດຳເນີນທຸລະກິດ

ຜົນການດຳເນີນທຸລະກິດທັງໝົດຂອງ ຜ-ຟຟລ ໃນປະຈຳໄຕມາດ 3 ປີ 2020 ລວມມີກຳໄລສຸດທິທັງໝົດ 234.363 ລ້ານກີບ, ເຊິ່ງທຽບກັບໄລຍະດຽວກັນໃນ ປີ 2019 ແມ່ນເພີ່ມຂຶ້ນ 149,75%. ສາເຫດຫຼັກແມ່ນມາຈາກການເພີ່ມຂຶ້ນຂອງລາຍຮັບຈາກການຂາຍກະແສໄຟຟ້າ ແລະ ກຳໄລຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ.

5.5 ການມອບພັນທະ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງ ທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປລາວ; ສະນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ດັ່ງນັ້ນ, ໃນໄຕມາດ 3 ປີ 2020 ຜ-ຟຟລ ໄດ້ມອບພັນທະໃຫ້ແກ່ລັດຖະບານ ເຊິ່ງປະກອບດ້ວຍ ຄ່າພາກຫລວງ ອາກອນມູນຄ່າເພີ່ມ, ອາກອນເງິນປັນຜົນ ແລະ ອາກອນເງິນເດືອນ / ເບ້ຍປະຊຸມ ລວມມູນຄ່າທັງໝົດ 8.023 ລ້ານກີບ.

ເອກະສານລາຍງານການເງິນ ໄຕມາດ 3
30 ກັນຍາ 2020

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເອກະສານລາຍງານການເງິນປະຈຳໄຕມາດ 3 (ກ່ອນກວດສອບ)

ວັນທີ 30 ກັນຍາ 2020

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2020

	ຍົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2020 ທີ່ບໍ່ໄດ້ກວດສອບ ລ້ານກີບ	31 ທັນວາ 2019 ກວດສອບ ລ້ານກີບ	30 ກັນຍາ 2020 ທີ່ບໍ່ໄດ້ກວດສອບ ລ້ານກີບ	31 ທັນວາ 2019 ກວດສອບ ລ້ານກີບ
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນ ໃນບໍລິສັດລູກ	3	-	-	618.299	540.631
ເງິນລົງທຶນ ໃນວິສາຫະກິດ ຮ່ວມ	4	4.989.510	4.901.466	4.989.510	4.901.466
ເງິນລົງທຶນ ໃນບໍລິສັດຮຸ້ນສ່ວນ	4	2.929.235	2.689.126	2.929.235	2.689.126
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ	5	2.217.880	2.217.880	2.244.327	2.375.604
ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ	6	9.529.596	9.841.857	9.009.190	9.355.851
ຊັບສິນຖາວອນທີ່ບໍ່ມີຕົວຕົນ		525	863	525	863
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ swap		6.233	11.963	6.233	11.963
ໜີ້ຕ້ອງຮັບຈາກສັນຍາ swap		169.743	178.689	169.743	178.689
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ-ໂຄງການກໍ່ສ້າງ		341.075	341.075	-	-
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ้ำປะกัน		62.768	101.581	62.768	101.581
ຊັບສິນທີ່ບໍ່ໝຸນວຽນອື່ນໆ		1.842	2.461	1.471	2.461
ລວມຊັບສິນບໍ່ໝຸນວຽນ		**20.248.407**	**20.286.961**	**20.031.301**	**20.158.235**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		310.593	979.774	289.371	948.847
ເງິນລົງທຶນໄລຍะสั้น		27.645	26.604	27.645	26.604
ເງິນກູ້ຍືມໄລຍะสั้นให้พากส่วนที่ก่ยวข้อง	12	278.666	454.042	278.666	454.042
ໜີ້ຕ້ອງຮັບການຄ้า ແລะ ໜີ້ຕ້ອງຮັບອື່ນໆ	7	1.306.459	565.802	1.313.484	534.595
ส่วนที่เกิงกำนิดจ่ายเงินล่วงหน้าสำลับสัญญาแลกปรุงอัตราดอกเบี้ย swap		8.685	11.373	8.685	11.373
ອาไพ่ ແລะ ເถ้าองในสาง, สุดท้		3.928	4.171	3.928	4.171
ຊັບສິນหมุนวงอื่นๆ		2.026.295	1.327.651	2.017.195	1.310.301
ລວມຊັບສິນໝຸນວຽນ		**3.962.271**	**3.369.417**	**3.938.974**	**3.289.933**
ລວມຍອດຊັບສິນ		**24.210.678**	**23.656.378**	**23.970.275**	**23.448.168**

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ EDL-Generation Public Company

ທ່ານ ດວງສີ ພາຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ວັນແສງ ວັນນะວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 11 ພະຈິກ 2020

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນກາງປີແບບລວມ ແລະ ແບບແຍກເຫຼ່ານີ້.

ໃບລາຍງານຖານະການເງິນ
ໃນວັນທີ 30 ກັນຍາ 2020

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2020 ທີ່ບໍ່ທວນຄືນ ລ້ານກີບ	31 ທັນວາ 2019 ກວດສອບ ລ້ານກີບ	30 ກັນຍາ 2020 ທີ່ບໍ່ທວນຄືນ ລ້ານກີບ	31 ທັນວາ 2019 ກວດສອບ ລ້ານກີບ
ທຶນຕົນເອງ ແລະ ໜີ້ສິນ					
ທຶນ					
ທຶນຂອງຜູ້ຖືຮຸ້ນ					
ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		547.147	547.147	547.147	547.147
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		30.247	20.220	30.247	20.220
ກຳໄລສະສົມ		1.040.868	1.014.989	1.086.510	1.035.607
ທຶນທີ່ເປັນສ່ວນຂອງບໍລິສັດແມ່		**9.321.098**	**9.285.192**	**9.366.740**	**9.305.810**
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		3.865	5.213	-	-
ລວມທຶນ		**9.324.963**	**9.290.405**	**9.366.740**	**9.305.810**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ຢືມໄລຍະຍາວສຸດທິ	8	3.320.220	3.361.782	3.104.623	3.184.156
ຮຸ້ນກູ້ສຸດທິ	9	9.918.771	9.370.051	9.918.771	9.370.051
ລວມໜີ້ສິນບໍ່ໝຸນວຽນ		**13.238.991**	**12.731.833**	**13.023.394**	**12.554.207**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		310.043	123.328	267.374	92.835
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	8	865.166	946.856	843.776	932.049
ເງິນກູ້ຢືມໄລຍະສັ້ນສຸດທິ	8	18.741	201.972	18.741	201.972
ລາຍຈ່າຍຄ້າງຈ່າຍ	10	451.091	360.701	448.567	360.369
ໜີ້ຕ້ອງສົ່ງ ອາກອນກຳໄລ		604	-	604	-
ໜີ້ສິນໝຸນວຽນອື່ນໆ		1.079	1.283	1.079	926
ລວມຍອດໜີ້ສິນໝຸນວຽນ		**1.646.724**	**1.634.140**	**1.580.141**	**1.588.151**
ລວມຍອດໜີ້ສິນ		**14.885.715**	**14.365.973**	**14.603.535**	**14.142.358**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**24.210.678**	**23.656.378**	**23.970.275**	**23.448.168**

ທ່ານ ຄອງສີ ພົງຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 11 ພະຈິກ 2020

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນກາງປີແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານຜົນໄດ້ຮັບ
ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2020

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ກັນຍາ 2020 ທີ່ບໍ່ທວນຄືນ ລ້ານກີບ	30 ກັນຍາ 2019 ທີ່ບໍ່ທວນຄືນ (ດັດແກ້) ລ້ານກີບ	30 ກັນຍາ 2020 ທີ່ບໍ່ທວນຄືນ ລ້ານກີບ	30 ກັນຍາ 2019 ທີ່ບໍ່ທວນຄືນ (ດັດແກ້) ລ້ານກີບ
ລາຍຮັບຈາກການຂາຍ		366.898	320.955	360.194	314.582
ຕົ້ນທຶນໃນການຂາຍ		(137.536)	(126.763)	(133.852)	(123.027)
ກຳໄລຂັ້ນຕົ້ນ		229.362	194.192	226.342	191.555
ລາຍຮັບອື່ນໆ		4.942	6.133	3.689	7.609
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(34.499)	(40.529)	(30.499)	(36.247)
ກຳໄລ/(ຂາດທຶນ) ສຸດທິຈາກອັດຕາແລກປ່ຽນ		(30.310)	6.636	(11.413)	11.110
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		229.137	78.974	229.137	78.974
ກຳໄລກ່ອນລາຍຈ່າຍທາງການເງິນ		398.632	245.406	417.256	253.001
ລາຍຈ່າຍທາງການເງິນ		(185.081)	(175.585)	(182.289)	(175.585)
ກຳໄລກ່ອນອາກອນກຳໄລ		213.551	69.821	234.967	77.416
ອາກອນກຳໄລ		(604)	-	(604)	-
ກຳໄລສຳລັບໃນຮອບເວລາ		**212.947**	**69.821**	**234.363**	**77.416**
ສ່ວນຂອງກຳໄລທີ່ເປັນຂອງ					
ສ່ວນຂອງບໍລິສັດແມ່		214.101	69.303	234.363	77.416
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(1.154)	518	-	-
		212.947	**69.821**	**234.363**	**77.416**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	11	127,52	41,28	139,58	46,11

ທ່ານ ສົມສຸ ພາຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 11 ພະຈິກ 2020

ບິດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນກາງປີແບບລວມ ແລະ ແບບແຍກເຫຼົ່ານີ້.

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງຂອງທຶນ

ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2020

	ເອກະສານລາຍງານການເງິນແບບລວມ ສ່ວນຂອງຜູ້ຖືຮຸ້ນບໍລິສັດແມ່							
	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມລະບຽບການ ລ້ານກີບ	ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ ລ້ານກີບ	ກຳໄລສະສົມຍັງບໍ່ທັນໄດ້ແບ່ງປັນ ລ້ານກີບ	ລວມ ລ້ານກີບ	ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ ລ້ານກີບ	ລວມທຶນຂອງຜູ້ຖືຮຸ້ນ ລ້ານກີບ
ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2020								
ໃນວັນທີ 1 ກໍລະກົດ 2019, ຕາມບົດລາຍງານຜ່ານມາ	6.717.215	985.621	471.423	13.832	180.424	8.368.515	2.287	8.370.802
ສ່ວນປ່ຽນແປງນະໂຍບາຍການບັນຊີ	-	-	54.969	4.433	948.850	1.008.252	2.949	1.011.201
ໃນວັນທີ 1 ກໍລະກົດ 2019 - ດັດແກ້	6.717.215	985.621	526.392	18.265	1.129.274	9.376.767	5.236	9.382.003
ກຳໄລສຳລັບໃນຮອບເວລາ	-	-	-	-	69.303	69.303	518	69.821
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ	-	-	-	3.885	-	3.885	-	3.885
ຈ່າຍເງິນປັນຜົນ	-	-	-	-	-	-	-	-
ໃນວັນທີ 30 ກັນຍາ 2019 - ທີ່ບທວນຄືນ (ດັດແກ້)	**6.717.215**	**985.621**	**526.392**	**22.150**	**1.198.577**	**9.449.955**	**5.754**	**9.455.709**
ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2020								
ໃນວັນທີ 1 ກໍລະກົດ 2020	6.717.215	985.621	547.147	18.185	826.767	9.094.935	5.019	9.099.954
ຂາດທຶນໃນຮອບເວລາ	-	-	-	-	214.101	214.101	(1.154)	212.947
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	12.062	-	12.062	-	12.062
ຈ່າຍເງິນປັນຜົນ	-	-	-	-	-	-	-	-
ໃນວັນທີ 30 ກັນຍາ 2020 - ທີ່ບທວນຄືນ	**6.717.215**	**985.621**	**547.147**	**30.247**	**1.040.868**	**9.321.098**	**3.865**	**9.324.963**

ທ່ານ ດວງສີ ພາຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 11 ພະຈິກ 2020

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນກາງປີແບບລວມ ແລະ ແບບແຍກຫຼັກນີ້.

	ເອກະສານລາຍງານການເງິນແບບແຍກ					
	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ	ຄ້ຽສະສົມຕາມລະບຽບການ ລ້ານກີບ	ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ ລ້ານກີບ	ກຳໄລສະສົມຍັງບໍ່ທັນໄດ້ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2019						
ໃນວັນທີ 1 ກໍລະກົດ 2019, ອີງຕາມລາຍງານກ່ອນໜ້ານີ້	6.717.215	985.621	471.423	13.832	206.934	8.395.025
ສ່ວນປ່ຽນແປງນະໂຍບາຍການບັນຊີ	-	-	54.969	4.433	944.708	1.004.110
ໃນວັນທີ 1 ກໍລະກົດ 2019 - ດັດແກ້	6.717.215	985.621	526.392	18.265	1.151.642	9.399.135
ກຳໄລສຳລັບໃນຮອບເວລາ	-	-	-	-	77.416	77.416
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ	-	-	-	3.885	-	3.885
ຈ່າຍເງິນປັນຜົນ	-	-	-	-	-	-
ໃນວັນທີ 30 ກັນຍາ 2019 - ທຶບທອນຄົນ (ດັດແກ້)	**6.717.215**	**985.621**	**526.392**	**22.150**	**1.229.058**	**9.480.436**
ສຳລັບ 3 ເດືອນສິ້ນສຸດວັນທີ 30 ກັນຍາ 2020						
ໃນວັນທີ 1 ກໍລະກົດ 2020	6.717.215	985.621	547.147	18.185	852.147	9.120.315
ຂາດທຶນສຳລັບໃນຮອບເວລາ	-	-	-	-	234.363	234.363
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ	-	-	-	12.062	-	12.062
ຈ່າຍເງິນປັນຜົນ	-	-	-	-	-	-
ໃນວັນທີ 30 ກັນຍາ 2020 - ທຶບທອນຄົນ	**6.717.215**	**985.621**	**547.147**	**30.247**	**1.086.510**	**9.366.740**

ທ່ານ ດວງສີ ພາຣະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 11 ພະຈິກ 2020

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2020 ທີ່ບໍ່ທົບທວນ ລ້ານກີບ	30 ກັນຍາ 2019 ທີ່ບໍ່ທົບທວນ (ດັດແກ້) ລ້ານກີບ	30 ກັນຍາ 2020 ທີ່ບໍ່ທົບທວນ ລ້ານກີບ	30 ກັນຍາ 2019 ທີ່ບໍ່ທົບທວນ (ດັດແກ້) ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ				
ກຳໄລກ່ອນອາກອນສຳລັບໃນຮອບເວລາ	213.551	69.821	234.967	77.416
ປັບປຸງ:				
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມ	124.366	115.852	121.546	112.928
ຕັດຮອນລາຍຈ່າຍຕົ້ນທຶນການອອກຮຸ້ນກູ້	7.832	3.616	7.832	3.616
ລາຍຈ່າຍທາງການເງິນ	140.354	140.489	137.562	140.489
ອາກອນກຳໄລ	604	-	604	-
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	(229.137)	(78.974)	(229.137)	(78.974)
ການປ່ຽນແປງທຶນໝຸນວຽນ:	**257.570**	**250.804**	**273.374**	**255.475**
ຫຼຸດລົງ/(ເພີ່ມຂຶ້ນ) ໃນ				
ຊັບສິນທີ່ບໍ່ໝຸນວຽນອື່ນໆ	442	(1.643)	442	(1.379)
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ້ຳປະກັນ	41.868	-	41.868	-
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ	(356.278)	(275.256)	(350.971)	(276.232)
ອາໄຫ່ ເຄື່ອງໃນສາງ	(11)	288	(11)	288
ຊັບສິນໝຸນວຽນອື່ນໆ	29.967	32.800	12.606	28.469
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	43.125	(31.592)	38.157	(26.017)
ລາຍຈ່າຍຄ້າງຈ່າຍ	8.941	65.467	9.768	64.339
ອາກອນກຳໄລຄ້າງຈ່າຍ	(604)	-	(604)	-
ໜີ້ສິນໝຸນວຽນອື່ນໆ	72	925	72	35
ເງິນສົດທີ່ໃຊ້ໃນກິດຈະກຳການດຳເນີນງານ	25.092	41.793	24.701	44.978
ກະແສເງິນສົດຈາກກິດຈະກຳການດຳເນີນງານສຸດທິ	**25.092**	**41.793**	**24.701**	**44.978**
ກະແສເງິນສົດທີ່ໃຊ້ໃນກິດຈະກຳການລົງທຶນ				
ຈ່າຍເງິນສົດສຳລັບການລົງທຶນໃນບໍລິສັດລູກ	-	-	(729)	-
ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	(799)	-	(799)	-
ຈ່າຍເງິນສົດສຳລັບເງິນລົງທຶນຈ່າຍລ່ວງໜ້າ	-	(4.999)	-	(9.474)
ຈ່າຍເງິນສົດສຳລັບຊື້ຊັບສິນພາຍໃຕ້ສັນຍາສຳປະທານ	-	-	36.448	-
ຈ່າຍເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງກູ້ຢືມໄລຍະສັ້ນ	(15.979)	(14.627)	(11.321)	(13.985)
ຮັບເງິນຈາກສ່ວນທີ່ກ່ຽວຂ້ອງກູ້ຢືມໄລຍະສັ້ນ	43.239	60	43.239	60
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	23.000	96.861	23.000	96.861
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ	**49.461**	**77.295**	**89.838**	**73.462**

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2020 ທີ່ບໍ່ທົບທວນ ລ້ານກີບ	30 ກັນຍາ 2019 ທີ່ທົບທວນ (ດັດແກ້) ລ້ານກີບ	30 ກັນຍາ 2020 ທີ່ບໍ່ທົບທວນ ລ້ານກີບ	30 ກັນຍາ 2019 ທີ່ທົບທວນ (ດັດແກ້) ລ້ານກີບ
ກະແສເງິນສົດຈາກກິດຈະກຳທາງການເງິນ				
ລາຍຈ່າຍທາງການເງິນ	(184.492)	(203.738)	(182.582)	(203.738)
ຮັບເງິນສົດຈາກເງິນກູ້ຢືມໄລຍະສັ້ນ	55.190	35.594	18.741	35.594
ຊຳລະເງິນກູ້ຢືມໄລຍະສັ້ນ	(19.959)	-	(19.959)	-
ຊຳລະເງິນກູ້ຢືມໄລຍະຍາວ	(79.234)	(101.886)	(79.234)	(101.886)
ເງິນສົດສຸດທິ ໃຊ້ໃນກິດຈະກຳການເງິນ	**(228.495)**	**(270.030)**	**(263.034)**	**(270.030)**
ການເພີ່ມຂຶ້ນ/(ຫຼຸດລົງ) ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	(153.942)	(150.942)	(148.495)	(151.590)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນຕົ້ນງວດ	456.557	1.056.506	430.412	1.035.910
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ	7.978	(5.435)	7.454	(5.400)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍງວດ	**310.593**	**900.129**	**289.371**	**878.920**

ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ

ໂອນຈາກໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆມາເປັນ ເງິນກູ້ໄລຍະສັ້ນ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	85.000	-	85.000	-
ຊຳລະສະສາງເງິນກູ້ຢືມໃຫ້ພາກສ່ວນທີ່ກ່ຽວຂ້ອງ ກັບໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	-	35.855	-	35.855

ທ່ານ ດວງສີ ພະຍົກ
ຜູ້ອຳນວຍການໃຫຍ່
ວັນທີ: 11 ພະຈິກ 2020

ທ່ານ ອັນແສງ ອັນມະວິງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 11 ພະຈິກ 2020

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 9 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນກາງປີແບບລວມ ແລະ ແບບແຍກເຫຼົ່ານີ້.

ບົດອະທິບາຍ	**ເນື້ອໃນ**
ພື້ນຖານການກະກຽມ	
1	ການລາຍງານກິດຈະການ
2	ພື້ນຖານການບັນຊີ
ຊັບສິນ	
3	ເງິນລົງທຶນ ໃນບໍລິສັດລູກ
4	ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ
5	ເງິນຈ່າຍລ່ວງໜ້າ ສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ
6	ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ
7	ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນໆ
ໜີ້ສິນ	
8	ເງິນກູ້ຢືມ
9	ຮຸ້ນກູ້
10	ລາຍຈ່າຍຄ້າງຈ່າຍ
ຂໍ້ມູນອື່ນໆ	
11	ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ
12	ພາກສ່ວນທີ່ກ່ຽວຂ້ອງ
13	ເຫດການທີ່ເກີດຂຶ້ນພາຍຫຼັງລາຍງານ

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ") ເປັນ ບໍລິສັດ ມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ("ສປປລາວ"). ກຸ່ມບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010 ("ວັນສ້າງຕັ້ງບໍລິສັດ"). ເປັນບໍລິສັດໃນເຄືອຂອງ ລັດວິສາຫະກິດ ໄຟຟ້າລາວ ("ຟຟລ") ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດພະລັງງານຂອງ ຟຟລ ໂດຍ ການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງ ບໍລິສັດຕາມສຳນັກງານ ນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010 ນຍ, ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນ ໂຮງງານໄຟຟ້າເອກະລາດ ("IPP") ໂຄງການກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ເລີ່ມດຳເນີນທຸລະກິດ, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນ ເຊລະບໍ, ຕາມການມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະ ສືບຕໍ່ກິດຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການຜະລິດໄປເຖິງຜູ້ ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ແມ່ນຂຶ້ນຢູ່ກັບ ຊັບສິນ ການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ກຸ່ມບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງກຸ່ມບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນໂດຍຫຍໍ້ປະຈຳໄຕມາດ 1 ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 11 ພະຈິກ 2020.

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນຫົກເດືອນຕົ້ນປີ ໄດ້ຖືກສ້າງຂຶ້ນໃຫ້ສອດຄ່ອງກັບນະໂຍບາຍຂອງບໍລິສັດ ຕາມທີ່ໄດ້ອະທິບາຍລະ ອຽດຕ່າງໆ ໃນໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019. ເອກະສານລາຍງານການເງິນເບື້ອງ ຕົ້ນ (ປະກອບມີ: ໃບສະຫຼຸບຊັບສິນບັດ,ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ລາຍງານສ່ວນປ່ຽນແປງທຶນ ຕົນເອງຂອງຜູ້ຖືຮຸ້ນ) ທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີຕາມລະບຽບການເປີດເຜີຍ ທີ່ອອກໂດຍ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 004/ຄຄຊ, ລົງວັນທີ 28 ມັງກອນ 2019.
ເອກະສານລາຍງານການເງິນປະຈຳໄຕມາດ ຄວນຈະອ່ານຄູ່ກັບໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2019.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນລະຫວ່າງປີ ການເງິນທີ່ຄາດວ່າ ຫຼື ຖ້າການຕັດບັນຊີການລາຍງານຊື່ວຄາວເທົ່ານັ້ນ ຖ້າມັນເໝາະສົມທີ່ຄາດວ່າຈະມີ ຫຼື ເລື່ອນການໃຊ້ຈ່າຍດັ່ງກ່າວໃນຊ່ວງທ້າຍປີທາງການເງິນ.

ອີງຕາມກົດໝາຍວ່າດ້ວຍການບັນຊີ ແລະ ຂໍ້ກຳນົດກ່ຽວກັບການບັນຊີ ແລະ ການກວດສອບບັນຊີ ໃນສ່ວນຂອງຫຼັກຊັບ ພາຍໃຕ້ສຳນັກງານ ຄະນະຄຸ້ມຄອງຫຼັກຊັບ (LSCO) ໃນ ສປປ ລາວ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງສ້າງ

ເອກະສານລາຍງານການເງິນສາກົນ (IFRS), ເຊິ່ງເປັນຫຼັກການບັນຊີທີ່ຮອງຮັບໂດຍທົ່ວໄປ. ເຖິງຢ່າງໃດກໍຕາມ, ກະຊວງການເງິນໄດ້ອອກແຈ້ງການເລກທີ 697/ກງ, ໃນວັນທີ 20 ມີນາ 2017, ເຊິ່ງໃຫ້ທາງເລືອກສຳລັບ ວິສາຫະກິດທີ່ມີປະໂຫຍດຕໍ່ສາທາລະນະ (PIE) ໃນການກະກຽມແຜນການນຳໃຊ້ມາດຕະຖານການລາຍງານການເງິນສາກົນ (IFRS) ພາຍໃນໄລຍະ 4 ປີ ແລະ ໃນວັນທີ 25 ພຶດສະພາ 2020 ຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກແຈ້ງການສະບັບເລກທີ 009/ຄຄຊ, ເຊິ່ງໄດ້ລະບຸກ່ຽວກັບການຍືດເວລາສຳລັບບໍລິສັດຈົດທະບຽນເພື່ອກະກຽມແຜນການປະຕິບັດມາດຕະຖານ IFRS ຈົນຮອດວັນທີ 31 ທັນວາ 2025 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດ, ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ມັງກອນ 2026.

ໃນປະເທດລາວ ມີຂໍ້ແຕກຕ່າງທີ່ມີສາລະສຳຄັນລະຫ່ວາງນະໂຍບາຍການບັນຊີຂອງບໍລິສັດ ກັບ IFRS ໃນຫຼາຍໆດ້ານເຊັ່ນ ຊັບສິນບັດຖີທີ່ມີຕົວຕົນ ສັນຍາເຊົ່າ ອາກອນລາຍໄດ້ ຄ່າໃຊ້ຈ່າຍກ່ອນການດຳເນີນງານ ແລະ ຕົ້ນທຶນເງິນທຶນກູ້ຢືມ. ຜູ້ໃຊ້ເອກະສານລາຍງານການເງິນຄວນເຂົ້າໃຈຄວາມແຕກຕ່າງທີ່ອາດມີຜົນກະທົບຕໍ່ການຕັດສິນໃຈໃນການນຳໃຊ້ຂໍ້ມູນໃນເອກະສານລາຍງານການເງິນ ແລະ ນຳໃຊ້ຢ່າງລະມັດລະວັງ.

ໃນການກະກຽມເອກະສານລາຍງານການເງິນເຫຼົ່ານີ້, ຜູ້ບໍລິຫານຕ້ອງໃຊ້ດຸນພິນິດ, ຄາດຄະເນ ແລະ ສົມມຸດຕິຖານ ທີ່ມີຜົນກະທົບ ລາຍງານມູນຄ່າຂອງຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນໃນວັນທີຂອງເອກະສານລາຍງານການເງິນ ການປ ແລະ ມູນຄ່າລາຍຮັບ ແລະ ລາຍຈ່າຍໃນໄລຍະລາຍງານ. ເຖິງແມ່ນວ່າການປະເມີນການເຫຼົ່ານີ້ຂຶ້ນຢູ່ກັບຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນ. ຜົນທີ່ເກີດຂຶ້ນຈິງອາດຈະແຕກຕ່າງຈາກທີ່ຄາດຄະເນ.

3 ເງິນລົງທຶນໃນບໍລິສັດລູກ

	ເອກະສານລາຍງານການເງິນ ແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	540.631
ເພີ່ມຂຶ້ນ	77.668
ລວມ	**618.229**

4 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	7.590.592
ກຳໄລສຸດທິຂອງຮຸ້ນຈາກວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	381.512
ລາຍໄດ້ເງິນປັນຜົນ	(66.894)
ເພີ່ມຂຶ້ນ	3.509
ສ່ວນແຕກຕ່າງຈາກການແລກປ່ຽນ	10.026
ລວມ	**7.918.745**

4 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019, ແລະ ເງິນປັນຜົນສຳລັບຮອບເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2020 ແລະ 2019 ມີດັ່ງນີ້:

4.1 ເງິນລົງທຶນໃນວິສາຫະກິດຂາຮຸ້ນ

	ອັດຕາສ່ວນເງິນລົງທຶນ			ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າຕົ້ນທຶນ		ການດ້ອຍຄ່າ		ມູນຄ່າສຸດທິ		ເງິນລົງທຶນວິທີສ່ວນໄດ້ເສຍ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2020	31 ທັນວາ 2019	ປະເພດ ທຸລະກິດ	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	30 ກັນຍາ 2019
	(%)			(ລ້ານກີບ)									
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງຶມ 2 ຈຳກັດ	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	401.513	457.020	49.735	54.224
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	78.806	70.952	-	15.516
ບໍລິສັດ ໄຟຟ້າ ນ້ຳງຶມ 5 ຈຳກັດ	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	110.229	103.978	-	-
ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ	15	15	ຜະລິດໄຟຟ້າ	497.163	497.163	-	-	497.163	497.163	483.920	491.357	-	-
ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ	20	20	ຜະລິດໄຟຟ້າ	605.016	605.016	-	-	605.016	605.016	701.540	602.070	-	-
ບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ	10	10	ຜະລິດໄຟຟ້າ	18.162	18.162	-	-	18.162	18.162	25.145	25.145	-	-
ບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ	20	20	ຜະລິດໄຟຟ້າ	5.537	5.537	-	-	5.537	5.537	8.928	7.618	-	-
ບໍລິສັດ ໄຟຟ້າ ໄຊຍະບຸລີ ຈຳກັດ	20	20	ຜະລິດໄຟຟ້າ	3.172.963	3.172.963	-	-	3.172.963	3.172.963	3.179.429	3.143.326	-	-
ລວມວິສາຫະກິດຂາຮຸ້ນ				**4.865.845**	**4.865.845**	-	-	**4.865.845**	**4.865.845**	**4.989.510**	**4.901.466**	**49.735**	**69.740**

4 ເງິນລົງທຶນໃນວິສະຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

4.2 ເງິນລົງທຶນໃນບໍລິສັດຮຸ້ນສ່ວນ

	ອັດຕາສ່ວນເງິນລົງທຶນ			ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2020	31 ທັນວາ 2019	ປະເພດ ທຸລະກິດ	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	31ທັນວາ 2019	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	31 ທັນວາ 2019	30 ກັນຍາ 2020	30 ກັນຍາ 2019
	(%)			*(ລ້ານກີບ)*									
ບໍລິສັດຮຸ້ນສ່ວນ													
ບໍລິສັດ ເຫີນຫີນບຸນ ພາວເວີ ຈຳກັດ	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	2.266.074	2.031.605	-	204.596
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	18.499	23.674	17.159	13.036
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ	60	60	ຜະລິດໄຟຟ້າ	21.933	19.785	-	-	21.933	19.785	12.751	12.958	-	-
ບໍລິສັດ ໄຟຟ້າ ນ້ຳດີກ 1 ຈຳກັດ	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	52.535	52.703	-	-
ບໍລິສັດ ເຂື່ອນໄຟຟ້າ ນ້ຳພຸນ ຈຳກັດ	51	51	ຜະລິດໄຟຟ້າ	7.172	5.811	-	-	7.172	5.811	2.746	2.485	-	-
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ (ບໍລິສັດຫຸ້ນສ່ວນກັບ ບໍລິສັດ O&M)	60	60	ບໍລິການ ບຳລຸງຮັກສາ	-	-	-	-	-	-	(228)	(253)	-	-
ບໍລິສັດ ອີດີແອວເຈັນ ເຣດ ຈຳກັດ	80	80	ບໍລິການ	123.222	123.222			123.222	123.222	122.068	122.811	-	-
ບໍລິສັດ ໄຟຟ້າ ພະລັງນ້ຳ ນ້ຳອຸ ຈຳກັດ	15	15	ຜະລິດໄຟຟ້າ	364.640	364.640	-	-	364.640	364.640	375.688	368.028	-	-
ບໍລິສັດ ໄຟຟ້າມັ່ງ 1 ຈຳກັດ	10	10	ຜະລິດໄຟຟ້າ	37.595	37.595	-	-	37.595	37.595	38.707	38.707	-	-
ບໍລິສັດ ໄຟຟ້າລີກ 1 ຈຳກັດ	10	10	ຜະລິດໄຟຟ້າ	34.680	34.680	-	-	34.680	34.680	40.395	36.408	-	-
ລວມບໍລິສັດຮຸ້ນສ່ວນ				**1.766.051**	**1.762.542**	**-**	**-**	**1.766.051**	**1.762.542**	**2.929.235**	**2.689.126**	**17.159**	**217.632**
ລວມວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ				**6.631.896**	**6.628.387**	**-**	**-**	**6.631.896**	**6.628.387**	**7.918.745**	**7.590.592**	**66.894**	**287.372**

ເງິນລົງທຶນໃນວິສາຫະກິດຂາຮຸ້ນແລະ ບໍລິສັດຮຸ້ນສ່ວນ ຂອງບໍລິສັດຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

5 ເງິນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

	ເອກະສານລາຍງານ ການເງິນແບບລວມ	ເອກະສານລາຍງານ ການເງິນແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)	
ວັນທີ 1 ມັງກອນ	2.217.880	2.375.604
ເພີ່ມຂຶ້ນ	-	-
ຫຼຸດລົງ	-	(76.645)
ໂອນຈາກການລົງທຶນໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	(54.632)
ລວມ	**2.217.880**	**2.244.327**

6 ຊັບສິນພາຍໃຕ້ສັນຍາສຳປະທານ

	ເອກະສານລາຍງານ ການເງິນແບບລວມ	ເອກະສານລາຍງານການ ເງິນແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)	
ວັນທີ 1 ມັງກອນ	9.841.857	9.355.851
ເພີ່ມຂຶ້ນ	73.856	30.653
ຫັກຄ່າຫຼ້ຍຫ້ຽນ	(386.117)	(377.314)
ລວມ	**9.529.596**	**9.009.190**

7 ໜີ້ຕ້ອງຮັບຈາກລູກໜີ້ການຄ້າ ແລະ ໜີ້ຕ້ອງຮັບອື່ນ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)			
ໜີ້ຕ້ອງຮັບການຄ້າຈາກ ພາກສ່ວນທີ່ກ່ຽວຂ້ອງ	1.253.807	536.270	1.226.530	514.539
ໜີ້ຕ້ອງຮັບອື່ນໆຈາກ ພາກສ່ວນທີ່ກ່ຽວຂ້ອງ	41.974	22.415	37.174	12.939
ອື່ນໆ	10.678	7.117	49.780	7.117
ລວມ	**1.306.459**	**565.802**	**1.313.484**	**534.595**

8 ເງິນກູ້ຢືມ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)			
ເງິນກູ້ຢືມໄລຍະສັ້ນ	18.741	201.972	18.741	201.972
ເງິນກູ້ຢືມໄລຍະຍາວ ຈັດເປັນ ໄລຍະສັ້ນ	865.166	946.856	843.776	932.049
ລວມເງິນກູ້ຢືມໄລຍະສັ້ນ ແລະ ເງິນກູ້ຢືມໄລຍະຍາວ ຈັດເປັນ ໄລຍະສັ້ນ	**883.907**	**1.148.828**	**862.517**	**1.134.021**
ເງິນກູ້ຢືມໄລຍະຍາວ	3.320.220	3.361.782	3.104.623	3.184.156
ລວມເງິນກູ້ຢືມໄລຍະຍາວ	**3.320.220**	**3.361.782**	**3.104.623**	**3.184.156**
ລວມ	**4.204.127**	**4.510.610**	**3.967.140**	**4.318.177**

8 ເງິນກູ້ຢືມ (ຕໍ່)

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບ ວັນທີ 30 ກັນຍາ 2020 ມີດັ່ງນີ້:

	ເອກະສານລາຍງານ ການເງິນແບບລວມ	ເອກະສານລາຍງານ ການເງິນແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)	
ວັນທີ 1 ມັງກອນ	4.510.610	4.318.177
ເພີ່ມຂຶ້ນ	55.190	18.741
ຈ່າຍເງິນຄືນ	(531.819)	(531.819)
ປ່ຽນແປງສຸດທິໃນຕົ້ນທຶນເງິນກູ້ລໍຖ້າຕັດບັນຊີ	1.071	1.071
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	169.075	160.970
ລວມ	**4.204.127**	**3.967.140**

ສັນຍາເງິນກູ້

ໃນວັນທີ 21 ສິງຫາ 2020, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ຕົກລົງເຊັນສັນຍາສິນເຊື່ອ ກັບ ທະນາຄານ ຫວຽດຕິນ ລາວ ຈຳກັດ ສຳລັບສັນຍາສິນເຊື່ອ ວົງເງິນ 190.000 ລ້ານກີບ ຫຼື ໂດລາສະຫະລັດທີ່ທຽບເທົ່າ. ເປົ້າໝາຍນຳໃຊ້ໃນການເພີ່ມທຶນໝຸນວຽນ ເພື່ອຮັບໃຊ້ໃນການດຳເນີນທຸລະກິດໄລຍະສັ້ນ. ອັດຕາດອກເບ້ຍເງິນກູ້ໃນສັນຍາສິນເຊື່ອສະບັບນີ້ ແມ່ນ 5,5% ຕໍ່ປີ ສຳລັບສະກຸນເງິນໂດລາສະຫະລັດ ແລະ 8,5% ຕໍ່ປີ ສຳລັບສະກຸນເງິນກີບ, ໄລຍະເວລາກູ້ຢືມຂອງແຕ່ລະບ້ອງໜີ້ທີ່ໄດ້ບັນທຶກໄວ້ໃນໃບຮັບຮູ້ໜີ້ ສູງສຸດບໍ່ໃຫ້ເກີນ 6 ເດືອນ ນັບຈາກມື້ເບີກຖອນ ແລະ ຊຳລະດອກເບ້ຍທຸກໆເດືອນ.

ບໍລິສັດໄດ້ເບີກຖອນເງິນກູ້ວົງເງິນທີ 1 ຈຳນວນ 2,03 ລ້ານໂດລາ ຫຼື ທຽບເທົ່າ 18.741 ລ້ານກີບ ໃນວັນທີ 30 ກັນຍາ 2020.

9 ຮຸ້ນກູ້

	ເອກະສານລາຍງານ ການເງິນແບບລວມ	ເອກະສານລາຍງານ ການເງິນແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)	
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ	-	-
ຮຸ້ນກູ້ທີ່ຈັດເປັນໄລຍະຍາວ	10.036.284	9.539.271
ຕົ້ນທຶນທາງການເງິນລໍຖ້າຕັດບັນຊີ	(117.513)	(169.220)
ສຸດທິ	**9.918.771**	**9.370.051**

9 ຮຸ່ນກູ້ (ຕໍ່)

ການເຄື່ອນໄຫວຮຸ່ນກູ້ສຳລັບຮອບເວລາ ລາຍງານ 3 ເດືອນ ສິ້ນສຸດວັນທີ ວັນທີ 30 ກັນຍາ 2020 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)
ວັນທີ 1 ມັງກອນ	9.370.051
ເພີ່ມຂຶ້ນ ສຸດທິ	-
ຈ່າຍເງິນຄືນ	-
ຕັດຈຳໜ່າຍຕົ້ນທຶນທາງການເງິນລໍຖ້າຕັດບັນຊີ	51.707
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	497.013
ລວມ	**9.918.771**

10 ລາຍຈ່າຍຄ້າງຈ່າຍ

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)			
ດອກເບ້ຍຄ້າງຈ່າຍ	330.021	287.719	329.139	287.655
ຄ່າພາກຫຼວງ ແລະອາກອນອື່ນໆຄ້າງຈ່າຍ	111.470	67.293	111.014	67.049
ອື່ນໆ	9.600	5.689	8.414	5.665
ລວມ	**451.091**	**360.701**	**448.567**	**360.369**

11 ກຳໄລ (ຂາດທຶນ) ພື້ນຖານຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນ ສຳລັບ ວັນທີ 30 ກັນຍາ 2020 ແລະ 2019 ແມ່ນຄິດໄລ່ຕາມກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍລະຫວ່າງ ໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2019 (ດັດແກ້)	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2019 (ດັດແກ້)
	(ລ້ານກີບ)			
ກຳໄລ(ຂາດທຶນ)ທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ (ລ້ານກີບ)	214.101	69.303	234.363	77.416
ຈຳນວນຮຸ້ນສາມັນທີ່ອອກຈຳໜ່າຍ (ລ້ານຮຸ້ນ)	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ(ກີບ)	**127,52**	**41,28**	**139,58**	**46,11**

12 ພາກສ່ວນທີ່ກ່ຽວຂ້ອງ

ຜູ້ຖືຮຸ້ນລາຍໃຫຍ່ຂອງບໍລິສັດແມ່ນ ລັດວິສາຫະກິດ ໄຟຟ້າລາວ ເຊິ່ງຖືຮຸ້ນໃນອັດຕາ 75% ຂອງຮຸ້ນບໍລິສັດ, ຮຸ້ນທີ່ເຫຼືອແມ່ນຖືໂດຍນັກລົງທຶນທົ່ວໄປ.
ລາຍລະອຽດຂອງບໍລິສັດ ລູກ, ວິສາຫະກິດຮ່ວມ ແລະ ບໍລິສັດ ຮຸ້ນສ່ວນ ໄດ້ສະແດງໄວ້ໃນບົດອະທິບາຍຂໍ້ທີ 3 ແລະ 4.
ລາຍການທີ່ສຳຄັນດັ່ງຕໍ່ໄປນີ້ເກີດຂຶ້ນກັບກິດຈະການທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບ ຮອບເວລາລາຍງານ 3 ເດືອນ ສິ້ນສຸດວັນທີ ວັນທີ 30 ກັນຍາ 2020 ແລະ 2019 ກັບ ພາກສ່ວນ ທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນແບບ ແຍກ**	
	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	30 ກັນຍາ 2019 (ກວດສອບ)
		(ລ້ານກີບ)		
ບໍລິສັດແມ່				
ຂາຍກະແສໄຟຟ້າ	366.898	320.955	360.176	314.582
ລາຍຈ່າຍທາງການເງິນ	48.282	47.219	48.282	47.219
ລາຍຮັບທາງການເງິນ	3.894	4.904	3.894	4.904

12 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດຄົງເຫຼືອໃນວັນທີ 30 ກັນຍາ 2020 ແລະ 31 ທັນວາ 2019 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)			
ລາຍຈ່າຍລ່ວງໜ້າສຳລັບການລົງທຶນຊັບສິນພາຍໃຕ້ສັນຍາສຳປະທານ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	2.217.880	2.217.880	2.217.880	2.217.880
ບໍລິສັດລູກ				
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	-	-	-	-
ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ້ ຈຳກັດ	-	-	14.622	145.434
ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ	-	-	11.825	12.290
	2.217.880	**2.217.880**	**2.244.327**	**2.375.604**
ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	278.666	454.042	278.666	454.042

ລາຍການເຄື່ອນໄຫວຂອງເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 30 ກັນຍາ 2020 ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນແບບລວມ/ແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)
ນະວັນທີ 1 ມັງກອນ	454.042
ຈັດປະເພດໃໝ່ລູກໜີ້ການຄ້າ	85.000
ຊຳລະເງິນ	(273.670)
ຜົນຕ່າງຈາກອັດຕາແລກປ່ຽນ	13.294
ລວມ	**278.666**

12 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)	30 ກັນຍາ 2020 (ກ່ອນກວດສອບ)	31 ທັນວາ 2019 (ກວດສອບ)
	(ລ້ານກີບ)			
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	601.416	549.514	574.139	527.301
ບໍລິສັດລູກ				
ບໍລິສັດ ນ້ຳບິ ພາວເວີ້ ຈຳກັດ	-	-	177	177
ລວມ	**601.416**	**549.514**	**574.316**	**527.478**
ເງິນກູ້ໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ				
- ເງິນກູ້ໄລຍະສັ້ນ	748.224	723.234	748.224	723.234
- ເງິນກູ້ໄລຍະຍາວ	3.004.369	3.062.376	3.004.369	3.062.376
ລວມ	**3.752.593**	**3.785.610**	**3.752.593**	**3.785.610**

ການເຄື່ອນໄຫວຂອງເງິນກູ້ຢືມ ຈາກພາກສ່ວນທີ່ກ່ຽວຂ້ອງນະວັນທີ 30 ກັນຍາ 2020 ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ
	30 ກັນຍາ 2020 (ກ່ອນກວດສອບ)
	(ລ້ານກີບ)
ນະວັນທີ 1 ມັງກອນ	3.785.612
ເພີ່ມຂຶ້ນ	-
ຊຳລະເງິນ	(175.884)
ຜົນຕ່າງຈາກອັດຕາແລກປ່ຽນ	142.865
ລວມ	**3.752.593**

13 ເຫດການທີ່ເກີດຂຶ້ນພາຍຫຼັງລາຍງານ

ໃນວັນທີ 01 ຕຸລາ 2020, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ), ໄດ້ຕົກລົງເຫັນດີໃຫ້ ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ (ບໍລິສັດ ພຊທວ) ດຳເນີນການຊື້ຮຸ້ນຂອງ ຜ-ຟຟລ ທີ່ ລັດ ວິສະຫະກິດໄຟຟ້າລາວ (ຟຟລ) ຖືຄອງຢູ່. ໃນສັດສ່ວນ 24 ສ່ວນຮ້ອຍ ຕາມການສະເໜີຂອງ ບໍລິສັດ ພຊທວ ແລະ ຟຟລ. ນະວັນທີ່ລາຍງານການຊື້ຂາຍຍັງຢູ່ໃນຂັ້ນຕອນການດຳເນີນການ.

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດວງສີ ພາຣາຍົກ

ຫົວໜ້າພະແນກບັນຊີ

ຄຳຫວ່າງ ສີສົມຫວັງ

ຫົວໜ້າພະແນກກວດສອບພາຍໃນ

ນິກອນ ແກ້ວວິໄລ
